ວຽງຈັນໃໝ່
VIENTIANE MAI NEWSPAPER
ນ.ສ.ພ ລາຍວັນ
ສຳນັກງານເລກທີ 36 ຖະໜົນເສດຖາທິລາດ ຕູ້ ປ.ນ 989 ໂທ : 212623-4 ແຟັກ : 215989
www.vientianemai.net news@vientianemai.net ປີທີ 37 ສະບັບທີ 12572

ທ່ານນາຍົກ ເນັ້ນຂະແໜງການເງິນ ເອົາໃຈໃສ່ອີກຫຼາຍບັນຫາ

★ ກອງປະຊຸມວຽກງານການເງິນທົ່ວປະເທດ ປະຈຳສົກປີ 2011-2012 ໄດ້ຈັດຂຶ້ນທີ່ສູນຮວມມີສາກົນ ແລະ ການຝຶກອົບຮົມ (ICTC) ໂດຍເປັນກຽດເຂົ້າຮ່ວມຂອງທ່ານ ທອງສິງ ທຳມະວົງ ນາຍົກລັດຖະມົນຕີ ຊຶ່ງມີບັນດາທ່ານລັດຖະມົນຕີວ່າການ ຊ່ວຍວ່າການ ພ້ອມບັນດາກົມ ກອງອ້ອມຂ້າງກະຊວງການເງິນ.

ທ່ານ ພູເພັດ ຄຳພູນວົງ ລັດຖະມົນຕີວ່າການກະຊວງການເງິນ ກ່າວໃນກອງປະຊຸມຄັ້ງນີ້ວ່າ ສົກປີ 2011-2012 ເປັນປີທີສອງແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ເຖິງແມ່ນວ່າໃນສະພາບແວດລ້ອມສາກົນ ແລະ ພາຍໃນບໍ່ເອື້ອອຳນວຍແກ່ການສ້າງສາພັດທະນາປະເທດຂອງພວກເຮົາ ແຕ່ຍ້ອນການໜູນບາກບັ່ນ ແລະ ການເຊີດຊູ

ຍ້ອງຍໍຜົນງານການກໍ່ສ້າງຮ... ແລະ ພັດທະນາຊົນນະ...

★ ກະຊວງສາທາລະນະສຸກ ຈັດພິທີຍ້ອງຍໍຜົນງານ ວຽກງານກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ

ສອງບໍລິສັດມອບຄອມພິວເຕີ ລວມມູນຄ່າ ໒໐໐ ລ້ານ ໃຫ້ຫ້ອງວ່າການລັດຖະບານ

★ ໃນວັນທີ 18 ກັນຍາ 2012 ບໍລິສັດ orient ES Capital Group ແລະ ບໍລິສັດ ລາວ ວັນແອນ ຄອມ ເຊີງ ແທນຊີ ກອບ ໄດ້ປະກອບສວນສະໜັບສະໜູນ ຊຸດຄອມພິວເຕີ ຈຳນວນ 30 ເຄື່ອງ ໃນນັ້ນປະກອບມີ ຄອມພິວເຕີໂນດບຸກ 20 ເຄື່ອງ ຕັ້ງໂຕະ 10 ເຄື່ອງ ປິ້ນເຕີຈຳນວນ 8 ໜ່ວຍ ປະກອບມີ ແຟັກສະແກນ ເນີ 4 ໜ່ວຍ ຈັກພິມ 4 ໜ່ວຍ ຈັກອັດເອກະສານ ຈຳນວນ 2 ໜ່ວຍ ແລະ ອຸປະກອນເສີມໃນ ໄລຍະອື່ນໆ ລວມມູນຄ່າ 200 ລ້ານກີບ ມາມອບໃຫ້ແກ່ຫ້ອງວ່າການລັດຖະບານ ອ່ານຕໍ່ໜ້າ 6

ທົບທວນຮ່າງກົດໝາຍ ເຂດເສດຖະກິດພິເສດ ຢູ່ ៥ ແຂວງ

★ ໃນພາຍອາທິດຜ່ານມາ ຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງເຂດເສດຖະກິດພິເສດ-ເຂດເສດຖະກິດສະເພາະ (ຄຄພສ) ໄດ້ຈັດກອງປະຊຸມທົບທວນຮ່າງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ ປະຈຳເຂດພາກໃຕ້ຂຶ້ນ ທີ່ຫ້ອງວ່າການປົກຄອງແຂວງສາລະວັນ ໂດຍການເປັນປະທານຂອງທ່ານນາງ ບຸນເພັງ ມູນໂພໄຊ ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ ຮອງປະທານປະຈຳການ ຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງເຂດເສດຖະກິດພິເສດ-ເຂດເສດຖະກິດສະເພາະ ອ່ານຕໍ່ໜ້າ 6

ພັກ ແລະ ບັນເລືອກຕັ້ງ ສສຊ ຊຸດທີ 7 ໃຫ້ແກ່ພະນັກງານລວມພ ແລະ ບຸກຄົນທົ່ວລະແໜງສາທາລະນະສຸກ ໃນວັນທີ 19 ກັນຍາ 2012 ປະທີ່ຜັດທະລານແມ່ຂອງ ໂດຍການເຂົ້າຮ່ວມຂອງທ່ານ ອາ ຊາງ ລາວລີ ກຳມະການກົມການເມືອງສູນກາງພັກ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ພ້ອມດ້ວຍລັດຖະມົນຕີວ່າການ ຊ່ວຍວ່າການ ຫົວໜ້າກົມ ຫ້ອງການ ແລະ ພະນັກງານ-ວິຊາການ ຂະແໜງສາທາລະນະສຸກ ທົ່ວປະເທດ.

ທ່ານ ສຈ.ດຣ.ເອກສະຫວ່າງ ວົງວິຈິດ ກຳມະການສູນກາງພັກ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ໄດ້ກ່າວບາງຕອນສຳຄັນວ່າ: ປັດຈຸບັນທົ່ວປະເທດ ມີບ້ານສາທາລະນະສຸກແບບ ຢ່າງທັງໝົດ ອ່ານຕໍ່ໜ້າ 6

ເຜີຍແຜ່ເຣັດທິດລອງ ៣ ສ້າງຂອງ ຂະແໜງອຸດສາຫະກຳ ແລະ ການຄ້າ

★ ກອງປະຊຸມເຜີຍແຜ່ແນະນຳການຈັດຕັ້ງເຣັດທິດລອງ 3 ສ້າງ ໃນອົງເຂດວຽກງານຂອງຂະແໜງອຸດສາຫະກຳ ແລະ ການຄ້າ ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າຂອງວັນທີ 19 ກັນຍາ 2012 ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ດຣ. ນາມ ວິຍະເກດ ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ມີທ່ານລັດຖະມົນຕີຊ່ວຍວ່າການ ທ່ານຫົວໜ້າຫ້ອງການ ບັນດາທ່ານຫົວໜ້າກົມ-ຮອງກົມ ຫົວໜ້າ-ຮອງຫົວໜ້າພະແນກ ພ້ອມດ້ວຍພະນັກງານຫຼັກແຫຼ່ງອ້ອມຂ້າງກະຊວງ ແລະ ແຂກຮັບເຊີນຈາກກອງເລຂາ 3 ສ້າງ ຂັ້ນສູນກາງເຂົ້າຮ່ວມຈຳນວນໜຶ່ງ.

ຈຸດປະສົງຂອງການຈັດກອງປະຊຸມຄັ້ງນີ້ ເພື່ອເຊື່ອມຊຶມມະຕິຂອງພັກ ຄຳສັ່ງຂອງລັດ ເອກະສານນິຕິກຳຕ່າງໆຂອງກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບວຽກງານ 3 ສ້າງ ແນໃສ່ຍົກລະດັບຄວາມຮູ້ ຄວາມສາມາດໃຫ້ແກ່ພະນັກງານ-ລັດຖະກອນ ໂດຍສະເພາະ ບຸກຄົນທີ່ຈະລົງໄປເຜີຍແຜ່ແນະນຳການຈັດຕັ້ງເຣັດທິດລອງ ສ້າງແຂວງເປັນທີ່ໜ່ວຍຍຸດທະສາດ ສ້າງເມືອງເປັນທີ່ໜ່ວຍ ອ່ານຕໍ່ໜ້າ 6

ນາງສາວລາວ ໒໐໑໒ ຈະແມ່ນໃຜ

★ ງານຖະແຫຼງຂ່າວການຄັດເລືອກ "ນາງສາວລາວ ປະຈຳປີ 2012" ໄດ້ຈັດຂຶ້ນໃນວັນທີ 17 ກັນຍາ 2012 ຜ່ານມາ ທີ່ໂຮງແຮມວຽງຈັນພລາຊາ ນະຄອນຫຼວງວຽງຈັນ ເຊິ່ງມີບັນດາທ່ານຄະນະຊີ້ນຳການຄັດເລືອກນາງສາວລາວ 2012 ບັນດາຜູ້ມອບທຶນຈາກພາກສ່ວນຕ່າງໆ ແລະ ນາງສາວລາວ ປະຈຳປີ 2011 ເຂົ້າຮ່ວມ. ອ່ານຕໍ່ໜ້າ 6

ດູໝັ່ນ ປະຢັດ ຮັກສາຄວາມສະອາດ ແລະ ມີວິໄນ ເປັນ